ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
**********000************

ອົງການໄອຍະການປະຊາຊົນສູງສຸດ

ເລກທີ ໐໔໙..../ອອປສ
ນະຄອນຫຼວງວຽງຈັນ, ວັນທີ ໒໒ ກໍລະກົດ 2014

# ຄຳແນະນຳ
# ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ເຖິງ: ຫົວໜ້າກົມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນ ພາກ, ແຂວງ, ນະຄອນ ແລະ ຫົວໜ້າອົງການໄອຍະການປະຊາຊົນເຂດໃນຂອບເຂດທົ່ວປະເທດ.

ເລື່ອງ: ການນຳໃຊ້ຮ່າງການຊຽນຄຳຖະແຫຼງຄະດີແພ່ງຮູບແບບໃໝ່.

ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009;
ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012;
ອີງຕາມ ການຄົ້ນຄວ້າເປັນເອກະພາບຂອງກົມວິຊາການ ຄັ້ງວັນທີ 15 ມັງກອນ 2014;
ອີງຕາມ ການຕົກລົງເຫັນດີຂອງຄະນະນຳອົງການໄອຍະການປະຊາຊົນສູງສຸດ ຄັ້ງວັນທີ 21 ມີນາ 2014.

ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນໃນການຖະແຫຼງຕໍ່ທີ່ປະຊຸມສານ ແລະ ເພື່ອເຮັດໃຫ້ການຊຽນຄຳຖະແຫຼງຄະດີແພ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ຕໍ່ສານຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ ຖືກຕ້ອງຕາມກົດໝາຍ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດຈິ່ງອອກຄຳແນະນຳດັ່ງນີ້:

1. ຄະດີແພ່ງທີ່ເກີດຂຶ້ນກ່ອນ ຫຼື ຫຼັງການນຳໃຊ້ຮ່າງການຊຽນຄຳຖະແຫຼງຄະດີແພ່ງໃນຮູບແບບໃໝ່ ຊຶ່ງອົງການໄອຍະການປະຊາຊົນກຳລັງຄົ້ນຄ້ວາຄະດີຢູ່ນັ້ນໃນເວລາຊຽນຄຳຖະແຫຼງກໍໃຫ້ປະຕິບັດຕາມຮ່າງການຊຽນຄຳຖະແຫຼງ ແບບໃໝ່;

2. ຄະດີແພ່ງທີ່ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ຫຼື ເຂດ ໄດ້ຖະແຫຼງຕໍ່ສານຂັ້ນຕົ້ນ ແລະ ສານຂັ້ນຕົ້ນ ໄດ້ລົງຄໍາຕັດສິນແລ້ວ, ຫາກມີການຂໍອຸທອນ ຫຼື ມີການສະເໜີຄັດຄ້ານ ໂດຍຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ຫຼື ເຂດ ຕໍ່ຄໍາຕັດສິນຂອງສານຂັ້ນຕົ້ນ ການຂຽນຄໍາຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ຕໍ່ສານຂັ້ນອຸທອນ ກໍ່ໃຫ້ຂຽນຕາມຮູບແບບໃໝ່;
3. ຄະດີແພ່ງທີ່ຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ຫຼື ພາກ ໄດ້ຖະແຫຼງຕໍ່ສານຂັ້ນອຸທອນ ແລະ ສານຂັ້ນອຸທອນໄດ້ລົງຄໍາພິພາກສາແລ້ວ, ຫາກມີການຂໍລົບລ້າງ ຫຼື ມີການສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນ ຫຼື ພາກ ຕໍ່ຄໍາພິພາກສາຂອງສານຂັ້ນອຸທອນ ການຂຽນຄໍາຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນພາກ ຫຼື ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕໍ່ສານຂັ້ນລົບລ້າງກໍໃຫ້ຂຽນຕາມຮູບແບບໃໝ່;
4. ສໍາລັບຄະດີແພ່ງທີ່ຫົວໜ້າອົງການໄອຍະການປະຊາຊົນ ໄດ້ຖະແຫຼງຕໍ່ສານຂັ້ນຕົ້ນ, ຂັ້ນອຸທອນ ຫຼື ຂັ້ນລົບລ້າງໄປແລ້ວນັ້ນ ເມື່ອສານປະຊາຊົນໄດ້ສົ່ງສໍານວນຄະດີຄືນໃຫ້ອົງການໄອຍະການປະຊາຊົນມີຄໍາເຫັນໃໝ່ການຂຽນຄໍາຖະແຫຼງກໍໃຫ້ປະຕິບັດຕາມຮູບແບບເກົ່າທີ່ໄດ້ຖະແຫຼງໄປນັ້ນ.

ດັ່ງນັ້ນ, ຈຶ່ງແນະນໍາມາຍັງທ່ານຫົວໜ້າກົມກວດກາຄະດີແພ່ງ ອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ ແລະ ຫົວໜ້າອົງການໄອຍະການປະຊາຊົນເຂດ ໃນຂອບເຂດທົ່ວປະເທດ ເພື່ອຈັດຕັ້ງປະຕິບັດຕາມຄໍາແນະນໍາສະບັບນີ້ນັບແຕ່ມື້ຮັບຊາບເປັນຕົ້ນໄປ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ອົງການໄອຍະການປະຊາຊົນສູງສຸດ

ຄໍາສານ ສຸວົງ